# ກອນແຫຼ່ ທີ່ມາຂອງງານສັງສັນ

| | |
|---|---|
| **ຈະຂໍກ່າວກອນ | ເວົ້າຕອນສຳຄັນ |
| ຄືງານສັງສັນ | ສິດເກົ່າວັນນີ້ |
| ເຮົາຈາກກັນມາ | ເວລານານປີ |
| ຈົນເຖິງວັນນີ້ | ຈິ່ງມາພົບກັນ |
| **ກ່ອນເກີດຂຶ້ນໄດ້ | ໃຊ້ເວລາຫຼາຍປີ |
| ຊອກຫາວິທີ | ສັ່ງໃຈປະສານ |
| ຮວບຮວມແນວຄິດ | ເພື່ອນມິດຊ່ວຍກັນ |
| ສ້າງຄວາມສັມພັນ | ບໍ່ເຄີຍລືມໄລ |
| **ຈຸດໜຶ່ງສຳຄັນ | ຄືນາງຂັນເງິນ |
| ຕິດຕໍ່ຊວນເຊີນ | ເພື່ອນຍິງທັງຫຼາຍ |
| ບິນມາພົບກັນ | ປະສານຫົວໃຈ |
| ດາລັສເມືອງໃຫຍ່ | ບ້ານນາງຄຳພອນ |
| **ຊຶ່ງມີບຸນຮົ່ມ | ເອື້ອຍໃຫຍ່ນຳພາ |
| ທັງສຸມຸນທາ | ຈັນເພັງອິນທະສອນ |
| ນາງສົມສນິດ | ບຸນເຖິງຄຳພອນ |
| ຕິກລົງແນ່ນອນ | ຈຶ່ງມາພົບກັນ |
| **ແລ້ວອີກຕໍ່ມາ | ບໍ່ນານເທົ່າໃດ ໂອ໋... ໂອຍ...... ໂອ໋ຍ.... |
| ແລ້ວອີກຕໍ່ມາ | ບໍ່ນານເທົ່າໃດ |
| ບຸນຮົ່ມເອື້ອຍໃຫຍ່ | ໄດ້ໄປໃນງານ |
| ຢູ່ອາແຄັນຊໍສ໌ | ພໍ້ຄົນສຳຄັນ |
| ເປັນຜູ້ຈັດການ | ວຽກງານເຖິງໃຈ |
| **ຈຶ່ງໄດ້ທັກທາຍ | ໃຫ້ຮູ້ສາຍເຫດ |
| ເປັນຄຣູຫູັກເຈັດ | ຮຽນຢູ່ຮຸ່ນໃດ |
| ກໍຄືທ້າວໜູ | ຄົນຮູ້ມາກມາຍ |

ບຸນຮົ່ມຈຶ່ງໄດ້ ທັກທາຍຊັກຊວນ
**ແນະນຳທ້າວໜູ ເປັນຜູ້ຕິດຕໍ່
ຂັນເງິນນັ້ນໜໍ ຕິດຕໍ່ຊັກຊວນ
ເລີຍມອບພາລະ ໜ້າທີ່ກະບວນ
ເຫັນວ່າສົມຄວນ ໜູນັ້ນຂີດຂຽນ
**ທັງສາມຊ່ວຍກັນ ສືບສານໃຫ້ຮູ້ ໂອ໋...ໂອ່....ໂອຍ...
ທັງສາມຊ່ວຍກັນ ສືບສານໃຫ້ຮູ້
ຫາຊື່ທີ່ຢູ່ ຂອງໝູ່ນັກຮຽນ
ທັງຄູອາຈານ ດ້ວຍຄວາມພາກພຽນ
ໜູກໍຂີດຂຽນ ລາຍຊື່ອອກມາ
**ສືບມາຫຼາຍເດືອນ ເໝືອນດັ່ງນັກຂ່າວ
ຈຶ່ງຮູ້ເຣື່ອງຣາວ ຂອງສີພັນດອນ
ເຂົາເປັນແຮງໜຶ່ງ ເຖິງຖອງແນ່ນອນ
ບໍ່ເຄີຍຢຸດຢ່ອນ ໂທຫາທຸກຄົນ
**ທັງສີ່ເຂົ້າຮ່ວມ ຮວມເປັນພລັງ
ບໍ່ເຄີຍຢຸດຢັ້ງ ຫາທາງຊອກຄົ້ນ
ຈົນເກັບກຳໄດ້ ເກືອບສອງຮ້ອຍຄົນ
ຢູ່ທຸກແຫ່ງຫົນ ສູ້ຫົນຄົ້ນຄວ້າ
**ແລ້ວວາງແຜນກັນ ຈັດງານສັງສັນ
ເພື່ອມາພົບກັນ ໃນເດືອນມີນາ
ທີ່ເມືອງກຽວເບີຕ໌ ອາຣີຊັອນນາ
ປີສອງພັນຫ້າ ຈະມາພົບກັນ
**ມີການປະຊຸມ ທາງອິນເຕີແນັຕ
ໜູຈັດຫ້ອງແຊຕ ແນັຕ ຄອນເຟີ້ຣັນ
ສິດຄູອາຈານ ເຫັນຄວາມສຳຄັນ
ເສີມສ້າງສັມພັນ ປະສານຫົວໃຈ
**ແນວຄິດສ້າງສັນ ອາຈານວັນພິລາ ໂອ໋....ໂອ່....ໂອຍ...

ແນວຄິດສ້າງສັນ        ອາຈານວັນພິລາ
ຍາເອື້ອຍແກ້ວຕາ        ເຮົານຳມາໃຊ້
ອາຈານຄຳກິ່ງ        ຕຶກລົງທັນໃດ
ອອກແບບເຄື່ອງໝາຍ        ມອບໃຫ້ອິນທວາ
**ອາຈານບຸນມີ        ບ່າວສາຣະວັນ
ກໍຮ່ວມປະສານ        ພາກັນຄົ້ນຄວ້າ
ຕ້ອງຂໍຂອບໃຈ        ອາຈານວັນພິລາ
ຊຶ່ງທ່ານນຳມາ        ແນວຄິດດີດີ
**ທຸກເທື່ອປະຊຸມ        ເຮົາຍັງສັງເກດ
ພີ່ນ້ອງຫຼັກເຈັດ        ຮ່ວມທິສດີ
ແລກປ່ຽນຄວາມຮູ້        ແນວຄິດທີ່ດີ
ຄວາມສາມັກຄີ        ໄມຕຣີນຳພາ
**ເປັນຈຸດທຳອິດ        ແນວຄິດເບື້ອງຕົ້ນ
ຂໍໃຫ້ທຸກຄົນ        ຮັບຮູ້ເຖິດໜາ
ຂອບໃຈຂັນເງິນ        ທີ່ໄດ້ນຳພາ
ຄວາມເສັຽສລະ        ຍິ່ງໃຫຍ່ເຫຼືອເກີນ
**ຕ້ອງຂໍຂອບໃຈ        ຈັບໄມຄ໌ປະກາດ
ທ່ານທົງສວັດ        ກັບນາງຂັນເງິນ
ດ້ວຍຄວາມກວ້າງຂວາງ        ບໍ່ເຄີຍລ່ວງເກີນ
ເປັນຄົນຊວນເຊີນ        ເຈົ້າພາບນຳພາ
*ຂໍໃຫ້ທັງສອງ        ຍິ່ງຍົງຈະເຣີນ ໂອ໋.... ໂອ່.... ໂອຍ
ຂໍໃຫ້ທັງສອງ        ຄອງຄວາມຈະເຣີນ
ຫາລື່ນຂຶ້ນເກີນ        ເງິນທອງຫຼັ່ງມາ
ທ່ານຫວັງສິ່ງໃດ        ໄດ້ຢ່າງຕັ້ງຕາ
ສົມປາຖນາ        ຄອບຄົວຖາວອນ
**ເຫັນວ່າສົມຄວນ        ສຳນວນທວນພົບ
ກ່າວມາຈົນຄົບ        ຈົບລົງຄຳກອນ

ລໍຖ້າວັນນັ້ນ　　　　　ເຫັນກັນແນ່ນອນ
ແລ້ວເຮົາຈະຍ້ອນ　　　　ຫວນມາພົບກັນ